ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ທະນາຄານແຫ່ງ ສປປ ລາວ

ກົມຈັດຕັ້ງແລະພະນັກງານ

ເລກທີ 63 /ກຈພ

ນະຄອນຫຼວງວຽງຈັນ, ວັນທີ 21 APR 2017

ສຳນັກງານ ຄຄຊ
ຮັບເຂົ້າ ເລກທີ 0441
ວັນທີ 25 APR 2017
ໂທລະສັບ 02...

# ແຈ້ງການ

ຮຽນ: ບັນດາທ່ານ ຫົວໜ້າກົມ-ທຽບເທົ່າ ແລະ ບັນດາສາຂາ ທຫລ ປະຈຳພາກ.

ເລື່ອງ: ການຈັດຕັ້ງປະຕິບັດການລາພັກຂອງພະນັກງານ-ລັດຖະກອນ ຢູ່ ທຫລ.

- ອີງຕາມຂໍ້ຕົກລົງວ່າດ້ວຍ ການລາພັກຂອງພະນັກງານ-ລັດຖະກອນຢູ່ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 288/ທຫລ ລົງວັນທີ 28 ມີນາ 2017.

ກົມຈັດຕັ້ງແລະພະນັກງານ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ: ເພື່ອເຮັດໃຫ້ການລາພັກຂອງພະນັກງານ-ລັດຖະກອນຢູ່ ທະຄານແຫ່ງ ສປປ ລາວ (ຝຶກງານຂຶ້ນໄປ) ສອດຄ່ອງກັບລະບຽບການຂອງຂັ້ນເທິງວາງອອກ, ຄະນະຜູ້ວ່າການ ທຫລ ຈຶ່ງເຫັນດີອະນຸມັດຂໍ້ຕົກລົງວ່າດ້ວຍ ການລາພັກຂອງພະນັກງານ-ລັດຖະກອນ ຢູ່ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 288/ທຫລ ລົງວັນທີ 28 ມີນາ 2017 ເພື່ອປ່ຽນແທນຂໍ້ຕົກລົງວ່າດ້ວຍ ລະບຽບການລາພັກຂອງພະນັກງານ-ລັດຖະກອນ ທຫລ ສະບັບເລກທີ 477/ທຫລ ລົງວັນທີ 28 ພະຈິກ 2006. ສະນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຊີ້ນຳການຈັດຕັ້ງປະຕິບັດລະບຽບການດັ່ງກ່າວ ໃຫ້ພະນັກງານ-ລັດຖະກອນ ພາຍໃນກົມກອງຂອງທ່ານ ໃຫ້ຮັບຮູ້ ແລະ ເຂົ້າໃຈຢ່າງທົ່ວເຖິງ.

ສຳລັບພະນັກງານ-ລັດຖະກອນດັ່ງກ່າວ ທີ່ໄດ້ລາພັກ ໂດຍອີງຕາມຂໍ້ຕົກລົງວ່າດ້ວຍ ລະບຽບການລາພັກຂອງພະນັກງານ-ລັດຖະກອນ ທຫລ ສະບັບເລກທີ 477/ທຫລ ລົງວັນທີ 28 ພະຈິກ 2006 ແລະ ແຈ້ງການວ່າດ້ວຍການລາພັກຂອງພະນັກງານ-ລັດຖະກອນ ຢູ່ ທຫລ ສະບັບເລກທີ 135/ກຈພ ລົງວັນທີ 11/8/2016 ແມ່ນໃຫ້ສືບຕໍ່ນັບວັນພັກ ໂດຍອີງຕາມປະເພດການລາພັກ ທີ່ໄດ້ພັກຜ່ານມາ ຈົນກວ່າຈະໝົດປີ 2017 (ລາຍລະອຽດມີຂໍ້ຕົກລົງກ່ຽວຂ້ອງ ຄັດຕິດມາພ້ອມນີ້).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ເປັນເຈົ້າການຊີ້ນຳການຈັດຕັ້ງປະຕິບັດ ຕາມເນື້ອໃນແຈ້ງການສະບັບນີ້ ແລະ ລະບຽບການກ່ຽວຂ້ອງ ຢ່າງເຄັ່ງຄັດດ້ວຍ.

**ຫົວໜ້າກົມຈັດຕັ້ງແລະພະນັກງານ**

ພານຸສັກ ແກ່ນອິງພະຈັນ